ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 003 ປປທ

ລົງວັນທີ 09 ຕຸລາ 2023

# ລັດຖະບັນຍັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ວ່າດ້ວຍການປັບປຸງອັດຕາອາກອນຊົມໃຊ້ຂອງບາງປະເພດສິນຄ້າ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 7 ສິງຫາ 2021;
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 286/ຄປຈ, ລົງວັນທີ 25 ກັນຍາ 2023;
- ອີງຕາມ ໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 30/ຄປຈ, ລົງວັນທີ 25 ກັນຍາ 2023.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ:**

**ມາດຕາ 1 ຈຸດປະສົງ**

ລັດຖະບັນຍັດສະບັບນີ້ ກຳນົດ ເພີ່ມອັດຕາອາກອນຊົມໃຊ້ຂອງບາງປະເພດສິນຄ້າ ທີ່ຖືກເສຍອາກອນຊົມໃຊ້ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ໃຊແມ່ງ IV ກົດໝາຍວ່າດ້ວຍອາກອນຊົມໃຊ້ ມາດຕາ 15 ອັດຕາອາກອນຊົມໃຊ້ ເປັນການນຳໃຊ້ຊົ່ວຄາວ ຈົນກວ່າຈະມີການປັບປຸງກົດໝາຍວ່າດ້ວຍອາກອນຊົມໃຊ້ ເພື່ອເປັນມາດຕະການຫຼຸດຜ່ອນການໄຫຼອອກຂອງເງິນຕາຕ່າງປະເທດ, ເພີ່ມທະວີການປະຢັດ, ຕ້ານການຟູມເຟືອຍ ແລະ ຮັບປະກັນການຈັດເກັບລາຍຮັບຈາກອາກອນຊົມໃຊ້ເຂົ້າງົບປະມານແຫ່ງລັດ ໃຫ້ຖືກຕ້ອງ, ຄົບຖ້ວນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ປະເພດສິນຄ້າທີ່ປັບປຸງອັດຕາອາກອນຊົມໃຊ້**

ສິນຄ້າທີ່ຖືກເສຍອາກອນຊົມໃຊ້ ທີ່ໄດ້ມີການປັບປຸງອັດຕາອາກອນຊົມໃຊ້ ມີປະເພດສິນຄ້າ ດັ່ງນີ້:

1. ພາຫະນະ ທີ່ນໍາໃຊ້ນໍ້າມັນເຊື້ອໄຟ (ສະເພາະລົດຈິບ ແລະ ລົດເກັງ);
2. ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ;
3. ເບຍ;
4. ຢາສູບ;
5. ເຄື່ອງດື່ມສໍາເລັດຮູບ;
6. ຕູ້ເກມຢອດຫຼຽນ, ເຄື່ອງຫຼິ້ນເກມທຸກຊະນິດ ແລະ ເຄື່ອງຫຼິ້ນເກມການພະນັນທຸກຊະນິດ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ.

**ມາດຕາ 3 ອັດຕາອາກອນຊົມໃຊ້**

ປະເພດສິນຄ້າທີ່ຖືກເສຍອາກອນຊົມໃຊ້ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ໂຮແມ່ງ IV ກົດໝາຍວ່າດ້ວຍອາກອນຊົມໃຊ້ ມາດຕາ 15 ອັດຕາອາກອນຊົມໃຊ້ ໄດ້ມີການປັບປຸງອັດຕາຂອງບາງລາຍການ ດັ່ງນີ້:

| ລ/ດ | ລາຍການສິນຄ້າ | ອັດຕາອາກອນຊົມໃຊ້ |
|---|---|---|
| 1 | ພາຫະນະ ທີ່ນໍາໃຊ້ນໍ້າມັນເຊື້ອໄຟ (ສະເພາະລົດຈິບ ແລະ ລົດເກັງ): | |
| | - ແຕ່ 1.000 ຊີຊີ ລົງມາ | 31% |
| | - ເກີນ 1.000 ຫາ 1.600 ຊີຊີ | 41% |
| | - ເກີນ 1.600 ຫາ 2.000 ຊີຊີ | 56% |
| | - ເກີນ 2.000 ຫາ 2.500 ຊີຊີ | 66% |
| | - ເກີນ 2.500 ຫາ 3.000 ຊີຊີ | 82% |
| | - ເກີນ 3.000 ຫາ 4.000 ຊີຊີ | 127% |
| | - ເກີນ 4.000 ຫາ 5.000 ຊີຊີ | 200% |
| | - ເກີນ 5.000 ຊີຊີ | 220% |
| 2 | ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ: | |
| | - ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ເກີນ 23% | 110% |
| | - ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ແຕ່ 23% ລົງມາ ຫາ 10% | 90% |
| | - ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ຕໍ່າກວ່າ 10% | 72% |
| 3 | ເບຍ: | |
| | - ເບຍທີ່ມີທາດເຫຼົ້າ ເກີນ 5% ຂຶ້ນໄປ | 70% |
| | - ເບຍທີ່ມີທາດເຫຼົ້າ ແຕ່ 0,5% ຫາ 5% | 60% |
| 4 | ປະເພດຢາສູບ: | |
| | - ຢາຊີກາ, ຢາສູບເປັນກອກ ຫຼື ເປັນຊອງ ແລະ ຢາສູບປະເພດອື່ນ | 72% |
| | - ຢາເສັ້ນ | 47% |

| | | |
|---|---|---|
| 5 | ປະເພດເຄື່ອງດື່ມສຳເລັດຮູບ: | |
| | - ນ້ຳອັດລົມ, ນ້ຳໂຊດາ ແລະ ເຄື່ອງດື່ມຄ້າຍຄຽງ<br>- ເຄື່ອງດື່ມຊູກຳລັງ | 12%<br>17% |
| 6 | ຕູ້ເກມຢອດຫຼຽນ, ເຄື່ອງຫຼິ້ນເກມທຸກຊະນິດ ແລະ ເຄື່ອງຫຼິ້ນເກມການພະນັນທຸກຊະນິດ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ | 50% |

ສ່ວນປະເພດສິນຄ້າ ແລະ ການບໍລິການອື່ນທີ່ຖືກເສຍອາກອນຊົມໃຊ້ ຊຶ່ງບໍ່ໄດ້ປັບປຸງ ແລະ ເພີ່ມອັດຕາອາກອນຊົມໃຊ້ ໃນລັດຖະບັນຍັດສະບັບນີ້ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ໂຮແມ້ງ IV ກົດໝາຍວ່າດ້ວຍອາກອນຊົມໃຊ້ ມາດຕາ 15 ອັດຕາອາກອນຊົມໃຊ້.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້.

**ມາດຕາ 5 ຜົນສັກສິດ**

ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

**ທອງລຸນ ສີສຸລິດ**